

# 13 ການປ້ອງກັນການລ່ວງລະເມີດທາງເພດເດັກ

ອາດເປັນເລື່ອງທີ່ແປກ ທີ່ຈະຊອກຫາຂໍ້ມູນກ່ຽວກັບການລ່ວງລະເມີດທາງເພດຈາກປຶ້ມ ທີ່ຊ່ວຍສອນເດັກຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນ. ແຕ່ວ່າເປັນເລື່ອງທີ່ໜ້າເສົ້າໃຈເພາະວ່າເດັກຫູໜວກ ມີໂອກາດຖືກລ່ວງລະເມີດທາງເພດຫຼາຍກວ່າເດັກທີ່ຫູດີ.

ດັ່ງນັ້ນ ມັນຈຶ່ງເປັນສິ່ງສຳຄັນສຳລັບເດັກຫູໜວກ ແລະ ຜູ້ທີ່ດູແລ ຈະຕ້ອງສິດສອນພວກເຂົາ ໃຫ້ຮູ້ກ່ຽວກັບບັນຫານີ້.

ເຖິງແນວໃດກໍ່ຕາມມັນກໍ່ເປັນເລື່ອງຍາກທີ່ຈະໂອ້ລົມກ່ຽວກັບການລ່ວງລະເມີດທາງເພດໃນບາງທ້ອງຖິ່ນ:

- ຄົນສ່ວນຫຼາຍບໍ່ຮູ້ວ່າການລ່ວງລະເມີດທາງເພດແມ່ນຫຍັງ?, ມັນເກີດຂຶ້ນໄດ້ແນວໃດ? ແລະ ຜົນຮ້າຍທີ່ເກີດຈາກການກະທຳດັ່ງກ່າວແມ່ນຫຍັງ?
- ບາງຄົນເຫັນວ່າບໍ່ເໝາະສົມທີ່ຈະສົນທະນາເລື່ອງເພດ.
- ບາງຄົນບໍ່ເຊື່ອວ່າ ການລ່ວງລະເມີດທາງເພດຈະເກີດຂຶ້ນກັບເດັກນ້ອຍທຸກໆຄົນ, ດັ່ງນັ້ນ ພວກເຂົາຈຶ່ງບໍ່ຄິດເຖິງ ຫຼື ເວົ້າເຖິງມັນ.
- ກົດລະບຽບ ຫຼື ຮີດຄອງປະເພນີວາງອອກສຳລັບເດັກທີ່ຈະສົນທະນາກ່ຽວກັບເລື່ອງເພດ, ມັນກຳນົດວ່າ ແມ່ນຫຍັງທີ່ຄວນເວົ້າ ແລະ ເມື່ອໃດຈຶ່ງສາມາດເວົ້າໄດ້.

**ຈົ່ງໃຫ້ເດັກຢູ່ຢ່າງປອດໄພ**

ບໍ່ມີໃຜມີສິດໝູນໃຊ້ເດັກ ເພື່ອຈຸດປະສົງທາງເພດ.

- ບໍ່ວ່າຈະເປັນສະມາຊິກໃນຄອບຄົວ (ຜູ້ໃຫຍ່ ຫຼື ເດັກນ້ອຍ)
- ເພື່ອນຂອງຄົນໃນຄອບຄົວ
- ເພື່ອນບ້ານ
- ຄົນແປກໜ້າ
- ອາຈານ
- ຜູ້ດູແລ.

ບໍ່ມີໃຜມີສິດ!






**ເດັກນ້ອຍທຸກໆຄົນຄວນຢູ່ຢ່າງປອດໄພຫ່າງໄກຈາກການລ່ວງລະເມີດທາງເພດ**
**ການປ້ອງກັນເດັກຈາກການຖືກລ່ວງລະເມີດ ແມ່ນໜ້າທີ່ຂອງຜູ້ໃຫຍ່ໝົດທຸກຄົນ.**

# ຄວາມຈິງກ່ຽວກັບການລ່ວງລະເມີດທາງເພດ



ການລ່ວງລະເມີດທາງເພດເດັກ ໝາຍເຖິງການໝູນໃຊ້ເດັກ ເພື່ອກິດຈະກຳທາງເພດໃດໜຶ່ງ. ການລ່ວງລະເມີດທາງເພດສາມາດເກີດຂຶ້ນໄດ້ກັບເດັກທຸກຄົນ. ມັນເກີດຂຶ້ນໃນທຸກຊຸມຊົນ, ບໍ່ວ່າໃນຄອບຄົວທີ່ທຸກຈົນ ຫຼື ຮັ່ງມີ. ມັນສາມາດເກີດຂຶ້ນໄດ້ທັງກັບເດັກຍິງ ແລະ ເດັກຊາຍ. ການລ່ວງລະເມີດທາງເພດເກືອບທັງໝົດແມ່ນເກີດຂຶ້ນກັບເດັກທີ່ມີອາຍຸ ແຕ່ 5 ປີຂຶ້ນໄປ, ແຕ່ມັນກໍ່ສາມາດດເກີດກັບເດັກທີ່ມີອາຍຸຕ່ຳກວ່ານັ້ນໄດ້ເຊັ່ນກັນ.

ພວກເຮົາບໍ່ຮູ້ຢ່າງແນ່ນອນວ່າ ການລ່ວງລະເມີດທາງເພດໂດຍທົ່ວໄປ ແມ່ນຫຍັງແທ້, ເນື່ອງຈາກວ່າເດັກຫຼາຍຄົນບໍ່ຍອມບອກວ່າ ແມ່ນຫຍັງແດ່ເກີດຂຶ້ນກັບພວກເຂົາ. ແຕ່ເປັນໄປໄດ້ວ່າ ມີເດັກຫຼາຍກວ່າ 1 ຄົນໃນຈຳນວນ 4 ຄົນ ແມ່ນຖືກລ່ວງລະເມີດທາງເພດຢູ່ໃນໂລກ.

ຜູ້ທີ່ລ່ວງລະເມີດເດັກສ່ວນຫຼາຍແມ່ນເປັນຜູ້ຊາຍ ແລະ ເດັກທີ່ຖືກລ່ວງລະເມີດເກືອບທັງໝົດ ແມ່ນຖືກກະທຳຈາກຄົນທີ່ພວກເຂົາຮູ້ຈັກ ເຊັ່ນ: ຍາດພີ່ນ້ອງ, ສະມາຊິກໃນຄອບຄົວ, ໝູ່ເພື່ອນ ຫຼື ເພື່ອນບ້ານ. ການລ່ວງລະເມີດທາງເພດເດັກສ່ວນໜ້ອຍທີ່ສຸດທີ່ຈະເກີດຈາກການກະທຳຂອງຄົນແປກໜ້າ. ບາງຄັ້ງ ການລ່ວງລະເມີດດັ່ງກ່າວກິນເວລາດົນ, ບາງເທື່ອເປັນປີໆກໍ່ມີ.

ຜູ້ທີ່ລ່ວງລະເມີດທາງເພດເດັກບາງຄົນກະທຳຜິດໂດຍປາສະຈາກການໃຊ້ກຳລັງບັງຄັບທາງຮ່າງກາຍ. ພວກເຂົາອາໄສຄວາມໄວ້ວາງໃຈ, ຄວາມໜ້າເຊື່ອຖື ຫຼື ອິດທິພົນ ເພື່ອໃຫ້ເດັກມີເພດສຳພັນນຳ. ພວກເຂົາອາດໃຊ້ການໂອ້ລົມຊັກຊວນ ແລະ ຄວາມດີ, ການນາບຂູ່ ແລະ ການຖຸກຄາມ, ການໃຫ້ຂອງຂວັນ ຫຼື ສິ່ງຕອບແທນ. (ຜູ້ລ່ວງລະເມີດເດັກອາດແມ່ນຄົນຫູໜວກທີ່ມາຕີສະໜິດ ເພື່ອເປັນເພື່ອນກັບເດັກ). ບໍ່ວ່າຈະເປັນບຸກຄົນໃດກໍ່ຕາມທີ່ໝູນໃຊ້ກຳລັງບັງຄັບທາງຮ່າງກາຍ, ການນາບຂູ່ ຫຼື ໝູນໃຊ້ຄວາມດີ ເພື່ອເຮັດໃຫ້ເດັກມີເພດສຳພັນນຳນັ້ນ, ຜົນຂອງການກະທຳດັ່ງກ່າວທັງໝົດ ກໍ່ລ້ວນແຕ່ເປັນອັນຕະລາຍຮ້າຍແຮງຕໍ່ເດັກ.

ມີຫຼາຍທາງທີ່ເດັກສາມາດຖືກລ່ວງລະເມີດທາງເພດໄດ້ເຊັ່ນ:

## ການລ່ວງລະເມີດໂດຍການສຳຜັດຕົວເດັກ

- ເພດສຳພັນທາງປາກ (ເມື່ອຜູ້ຊາຍໃຊ້ອະໄວຍະວະເພດຂອງຕົນໃສ່ເຂົ້າໃນປາກຂອງເດັກ)
- ການຈູບ ຫຼື ກອດເດັກໃນແບບທີ່ມີລັກສະນະ ທາງເພດ.
- ການມີເພດສຳພັນ ຫຼື ການຮ່ວມເພດທາງທະວານໜັກ (ເມື່ອຜູ້ຊາຍໃຊ້ອະໄວຍະວະເພດຂອງຕົນໃສ່ເຂົ້າໃນອະໄວຍະວະເພດຂອງເດັກຍິງ ຫລື ທະວານໜັກຂອງເດັກ)
- ການສຳຜັດອະໄວຍະວະເພດຂອງເດັກ ຫຼື ການໃຫ້ເດັກສຳຜັດອະໄວຍະວະເພດຂອງຜູ້ໃຫຍ່.
- ການບັງຄັບໃຫ້ເດັກຄ້າປະເວນີ (ການຫາເງິນຈາກການຂາຍຕົວຂອງເດັກ).

## ການລ່ວງລະເມີດໂດຍບໍ່ມີການສຳຜັດຕົວເດັກ

- ການໃຊ້ຄຳເວົ້າ ຫຼື ຮູບພາບທີ່ກະທົບກະເທືອນເດັກ, ເຮັດໃຫ້ເດັກມີຄວາມຕື່ນເຕັ້ນ ຫຼື ເຮັດໃຫ້ເດັກມີຄວາມຊິນເຄີຍກັບເລື່ອງເພດ.
- ໃຫ້ເດັກໄດ້ຍິນ ຫຼື ເບິ່ງການມີເພດສຳພັນ
- ໃຫ້ເດັກຖ່າຍຮູບເປືອຍ.
- ໃຫ້ເດັກເບິ່ງຮູບລາມົກ.

# ເປັນຫຍັງເດັກຫູໜວກຈຶ່ງມີຄວາມສ່ຽງໃນການຖືກລ່ວງລະເມີດທາງເພດ?

ເດັກນ້ອຍທັງໝົດ ແມ່ນມີຄວາມສ່ຽງໃນການຖືກລ່ວງລະເມີດທາງເພດ ຍ້ອນວ່າພວກເຂົາຕ້ອງໄດ້ເຊື່ອຟັງຜູ້ໃຫຍ່ ແລະ ເດັກທີ່ໃຫຍ່ກວ່າ, ເພາະເດັກກໍ່ອາໄສການດູແລຈາກຜູ້ໃຫຍ່. ເດັກນ້ອຍຖືກສອນວ່າ "ເດັກຄຳຮູ້" ຕ້ອງເຊື່ອຟັງຕາມທີ່ຜູ້ໃຫຍ່ບອກ. ນີ້ເຮັດໃຫ້ການປະຕິເສດຜູ້ໃຫຍ່ເປັນເລື່ອງຍາກ. ພ້ອມນັ້ນ ເດັກທີ່ຍັງນ້ອຍບໍ່ຮູ້ວ່າ ແມ່ນການປະພຶດຂອງຜູ້ໃຫຍ່ແບບໃດທີ່ຖືກຕ້ອງເໝາະສົມ ແລະ ຍອມຮັບໄດ້.

ໂດຍສະເພາະຢ່າງຍິ່ງສຳລັບເດັກຫູໜວກແມ່ນມີຄວາມສ່ຽງທີ່ສຸດທີ່ຈະຖືກລະເມີດທາງເພດ ຍ້ອນວ່າ:

- ໃນສັງຄົມໂດຍທົ່ວໄປ, ຖືວ່າຄົນພິການແມ່ນມີຄຸນຄ່ານ້ອຍກວ່າຄົນປົກກະຕິ. ດັ່ງນັ້ນ ຜູ້ລ່ວງລະເມີດຈຶ່ງຄິດວ່າມັນຈະບໍ່ຜິດ ທີ່ຈະໃຊ້ເດັກຫູໜວກເພື່ອຈຸດປະສົງທາງເພດ ແລະ ເນື່ອງຈາກວ່າເດັກຍິງໂດຍທົ່ວໄປ ແມ່ນຖືວ່າມີຄຸນຄ່າທາງສັງຄົມທີ່ຕ່ຳກວ່າເດັກຊາຍ. ສະນັ້ນ ເດັກຍິງຫູໜວກຈຶ່ງມີຄຸນຄ່ານ້ອຍກວ່າເດັກຫູໜວກເພດຊາຍ. ເດັກຍິງຫູໜວກຈຶ່ງກາຍເປັນກຸ່ມເດັກທີ່ມີຄວາມສ່ຽງທີ່ສຸດ.
- ຄົນຫູໜວກໃຊ້ການສຳຜັດເພື່ອສື່ສານ ຕົວຢ່າງ: ເພື່ອຮຽກຮ້ອງຄວາມສົນໃຈຈາກຄົນອື່ນ. ເດັກຫູໜວກອາດຄິດວ່າ ການສຳຜັດຄົນອື່ນເປັນເລື່ອງປົກປະຕິ, ເຖິງແມ່ນວ່າຄວາມຈິງແລ້ວໃນບາງຄັ້ງແມ່ນບໍ່ເໝາະສົມກໍ່ຕາມ.
- ເດັກຫູໜວກໄດ້ຮັບຂໍ້ມູນຂ່າວສານໜ້ອຍກວ່າເດັກຫູດີ ແລະ ບາງຄັ້ງຍ້ອນພຽງຄວາມຢາກຮູ້ຢາກເຫັນເທົ່ານັ້ນ. ເດັກຫູໜວກອາດຖືກປ່ອຍປະໃຫ້ຢູ່ຄົນດຽວ ແລະ ຮູ້ສຶກໂດດດ່ຽວ ເຊິ່ງເຮັດໃຫ້ພວກເຂົາກາຍເປັນເປົ້າໝາຍທີ່ງ່າຍດາຍຂອງຜູ້ລ່ວງລະເມີດທາງເພດ.
- ເດັກຫູໜວກທີ່ມີຄວາມສາມາດໃນການສື່ສານກັບຄົນອື່ນຢ່າງຈຳກັດອາດປະຕິບັດໃນສິ່ງທີ່ຄົນອື່ນຕ້ອງການ ໂດຍປາສະຈາກການສອບຖາມວ່າຍ້ອນຫຍັງຈຶ່ງຕ້ອງເຮັດ ແບບນັ້ນ.
- ເດັກຫູໜວກທີ່ມີທັກສະໃນການສື່ສານຈຳກັດອາດຈະບໍ່ເຂົ້າໃຈຢ່າງຈະແຈ້ງໃນສິ່ງທີ່ທ່ານອະທິບາຍກ່ຽວກັບຄວາມປອດໄພຂອງພວກເຂົາ.
- ການສື່ສານທີ່ຈຳກັດ ເຮັດໃຫ້ເປັນເລື່ອງຍາກທີ່ເດັກຈະບອກຄົນອື່ນກ່ຽວກັບການຖືກລ່ວງລະເມີດ. ບາງຄົນອາດລ່ວງລະເມີດເດັກຫູໜວກຍ້ອນພວກເຂົາຮູ້ວ່າເດັກຈະບໍ່ສາມາດເວົ້າໃນສິ່ງທີ່ເດັກປະເຊີນ. ເດັກຫູໜວກອາດຈະສາມາດສື່ສານໄດ້ສະເພາະກັບສະມາຊິກໃນຄອບຄົວ ຫຼື ຄົນທີ່ເບິ່ງແຍງພວກເຂົາເທົ່ານັ້ນ. ຖ້າຫາກວ່າຜູ້ລ່ວງລະເມີດທາງເພດເດັກຫາກເປັນຄົນໃນຄອບຄົວ, ຜູ້ດູແລ ຫຼື ຄູອາຈານຂອງເດັກເອງ ເຊິ່ງເດັກກໍ່ຈະຮູ້ສຶກບໍ່ປອດໄພທີ່ຈະເລົ່າເລື່ອງດັ່ງກ່າວກັບຄົນອື່ນ.



# ການລ່ວງລະເມີດທາງເພດກໍ່ໃຫ້ເກີດໄພອັນຕະລາຍທີ່ບໍ່ສິ້ນສຸດ

ການລ່ວງລະເມີດທາງເພດເປັນໄພອັນຕະລາຍຕໍ່ເດັກ ໃນໄລຍະທີ່ມັນເກີດຂຶ້ນ ແລະ ສາມາດສືບຕໍ່ຄຸກຄາມຜູ້ເຄາະຮ້າຍໄປຈົນຕະຫຼອດຊີວິດຂອງເຂົາ. ນີ້ເປັນຄວາມຈິງທີ່ສຸດ ຖ້າວ່າເດັກບໍ່ສາມາດເວົ້າກ່ຽວກັບການລ່ວງລະເມີດດັ່ງກ່າວ ຫຼື ບໍ່ສາມາດໄດ້ຮັບການຊ່ວຍເຫຼືອ, ການສະໜັບສະໜູນ ແລະ ການປິ່ນປົວ.

## ໄພອັນຕະລາຍທາງຮ່າງກາຍທີ່ບໍ່ສິ້ນສຸດ

ການຄຸ້ມຄອງທາງຮ່າງກາຍທີ່ບໍ່ສິ້ນສຸດອາດກໍ່ໃຫ້ມີການຕິດເຊື້ອພະຍາດຕິດຕໍ່ທາງເພດ (STIs). ຜູ້ລ່ວງລະເມີດທາງເພດອາດສົ່ງຕໍ່ພະຍາດໃຫ້ແກ່ເດັກເຊັ່ນ: ເອດ (HIV/AIDS) ແລະ ພະຍາດຕັບອັກເສບ ເຊິ່ງບໍ່ສາມາດປິ່ນປົວໄດ້. ພະຍາດຕິດຕໍ່ທາງເພດອື່ນໆ ຖ້າຫາກຖືກປ່ອຍປະ ບໍ່ໄດ້ຮັບການປິ່ນປົວແລ້ວ ອາດກໍ່ໃຫ້ເກີດບັນຫາອື່ນໆໃນອະນາຄົດ ເປັນຕົ້ນແມ່ນການຖືພາ, ພະຍາດມະເຮັງ ແລະ ການເສຍຊີວິດຍ້ອນພະຍາດຕິດຕໍ່ຮ້າຍແຮງອື່ນໆ. ເດັກທີ່ຕິດເຊື້ອພະຍາດຈາກການລ່ວງລະເມີດທາງເພດຈະບໍ່ສະແດງອາການ ດັ່ງນັ້ນ ພວກເຂົາຈຶ່ງບໍ່ໄດ້ຮັບການປິ່ນປົວ.

## ຜົນຮ້າຍທີ່ມີຕໍ່ພັດທະນາການຂອງເດັກ

ເດັກທີ່ຖືກລ່ວງລະເມີດທາງເພດຈະຮູ້ສຶກວ່າ ຕົນມີຄວາມຜິດຢ່າງໃຫຍ່ຫຼວງ, ຮູ້ສຶກອັບອາຍ ແລະ ໃຈຮ້າຍ. ຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດຫຼາຍໆຄົນບໍ່ສາມາດເຊື່ອຖືໄວ້ໃຈຄົນອື່ນອີກ. ຜູ້ຖືກເຄາະຮ້າຍຈະຮູ້ສຶກບໍ່ເຄົາລົບຕົນເອງ, ພວກເຂົາຈະຮູ້ວ່າຕົນເອງບໍ່ມີຄ່າ ແລະ ບໍ່ສົມຄວນທີ່ຈະໄດ້ຮັບຄວາມເຄົາລົບ.



## ວົງຈອນຂອງການກະທຳຜິດ

ເດັກທີ່ຖືກລ່ວງລະເມີດທາງເພດອາດສືບຕໍ່ຖືກລ່ວງລະເມີດ ໂດຍຄົນອື່ນຕະຫຼອດຊີວິດຂອງພວກເຂົາ. ຍ້ອນປະສົບການຈາກການຖືກລ່ວງລະເມີດເມື່ອຕອນຍັງເດັກ, ເມື່ອພວກເຂົາໃຫຍ່ຂຶ້ນພວກເຂົາອາດເຊື່ອວ່າການມີເພດສຳພັນ ເປັນທົນທາງດຽວທີ່ຈະນຳມາເຊິ່ງຄວາມຮັກ ແລະ ຄວາມປອດໄພ.

ການຖືກປະຕິບັດຢ່າງໂຫດຮ້າຍ ແລະ ການຖືກລ່ວງລະເມີດທາງເພດອາດກາຍເປັນແບບແຜນໃຫ້ແກ່ຊີວິດຂອງພວກເຂົາ. ຍິ່ງໄປກວ່ານັ້ນຖ້າປາສະຈາກການສະໜັບສະໜູນ ແລະ ການຊ່ວຍເຫຼືອ ເພື່ອປິ່ນປົວຈາກການກະທຳດັ່ງກ່າວ. ບັນດາເດັກຊາຍທີ່ເຄີຍຖືກລ່ວງລະເມີດທາງເພດ ອາດກາຍເປັນຜູ້ກະທຳເອງເມື່ອພວກເຂົາໃຫຍ່ຂຶ້ນ. ວົງຈອນນີ້ຈະກໍ່ໃຫ້ມີເຄາະຮ້າຍຕໍ່ມາ ແກ່ຜູ້ກະທຳຜິດອີກໃນອະນາຄົດ.

ໄພອັນຕະລາຍທີ່ເກີດຈາກການລ່ວງລະເມີດທາງເພດ ບໍ່ພຽງແຕ່ສົ່ງຜົນສະທ້ອນໃສ່ໂຕເດັກ ຫຼື ຄອບຄົວຂອງພວກເຂົາ ແຕ່ຍັງກະທົບໃສ່ຊຸມຊົນທັງໝົດ. ຍົກຕົວຢ່າງ: ບຸກຄົນທີ່ມີຄວາມລະອາຍ ແລະ ຖືກປ່ອຍປະໃຫ້ຢູ່ຢ່າງໂດດດ່ຽວສາມາດເປັນອັນຕະພານ ຫຼື ມີແນວຄິດຮຸນແຮງ ຫຼື ຫັນໃສ່ການຕິດເຫຼົ້າ ແລະ ຢາເສບຕິດ.



# ການປ້ອງກັນການລ່ວງລະເມີດທາງເພດ

ເມື່ອຄົນອື່ນປະຕິບັດກັບພວກເຮົາແນວໃດ, ກໍ່ຈະສົ່ງຜົນສະທ້ອນຕໍ່ຄວາມຮູ້ສຶກໝັ້ນໃຈຂອງພວກເຮົາເທົ່ານັ້ນ. ເມື່ອເດັກນ້ອຍຖືກປະຕິບັດຢ່າງໄຮ້ຄ່າ ແລະ ສິ້ນຫວັງ, ເດັກກໍ່ຈະເບິ່ງຕົນເອງຢ່າງໄຮ້ຄ່າ ແລະ ສິ້ນຫວັງ. ສະນັ້ນ ພວກເຮົາຕ້ອງສິດສອນເດັກໃຫ້ມີທັດສະນະທີ່ດີຕໍ່ຕົນເອງ ເພື່ອເຮັດໃຫ້ພວກເຂົາມີຄວາມໝັ້ນໃຈ ແລະ ສາມາດປົກປ້ອງຕົນເອງໄດ້.




*ເພື່ອເຮັດໃຫ້ເດັກຢູ່ຢ່າງປອດໄພ, ພວກເຮົາຕ້ອງໃຫ້ຄວາມຮູ້, ທັກສະ ແລະ ຄວາມໝັ້ນໃຈໃຫ້ແກ່ເດັກ ເພື່ອປະຕິເສດການປະພຶດທາງເພດທີ່ບໍ່ເໝາະສົມ ຈາກຄົນທີ່ໃຫຍ່ກວ່າ, ແຂງແຮງກວ່າ ແລະ ມີອຳນາດກວ່າ.*

## ຊ່ວຍໃຫ້ເດັກເຂົ້າໃຈ ແລະ ສາມາດສື່ສານ ກ່ຽວກັບການລ່ວງລະເມີດທາງເພດ

ເດັກຫູໜວກຮຽນຮູ້ໄດ້ງ່າຍທີ່ສຸດ ຖ້າພວກເຂົາຫາກເຫັນສິ່ງຂອງ. ສັນຍະລັກ, ການເຄື່ອນເໜັງຂອງຮ່າງກາຍ, ການສະແດງອອກທາງສີໜ້າ ໄປພ້ອມໆກັບການໃຊ້ຮູບພາບ, ການສະແດງລະຄອນຕຸກກະຕາ ແລະ ບົດເລື່ອງ ເຊິ່ງແມ່ນວິທີຊ່ວຍໃຫ້ທ່ານສອນລູກທີ່ຫູໜວກ ເພື່ອໃຫ້ຢູ່ຢ່າງປອດໄພຈາກການລ່ວງລະເມີດທາງເພດ. ຈົ່ງຊ່ວຍໃຫ້ເດັກເຂົ້າໃຈວ່າ:

- ການສຳຜັດບາງແບບແມ່ນບໍ່ເໝາະສົມ (ການຈັບມືຖາມສະບາຍດີໄດ້, ການກອດ ແມ່ນອາດບໍ່ເປັນຫຍັງ, ແຕ່ການສຳຜັດອະໄວຍະວະເພດ ແລະ ການນຳເອົາອະໄວຍະວະເພດຊາຍໃສ່ໃນປາກຂອງເດັກແມ່ນບໍ່ໄດ້).
- ເດັກຄວນບອກທ່ານຖ້າມີສິ່ງໃດໜຶ່ງທີ່ເຂົາບໍ່ມັກ ເມື່ອເກີດຂຶ້ນກັບລາວ.
- ເຂົາສາມາດປະຕິເສດບຸກຄົນໃດກໍ່ຕາມທີ່ພະຍາຍາມສຳຜັດເຂົາໂດຍມີລັກສະນະທາງເພດ.

ຄວາມເຂົ້າໃຈ ກ່ຽວກັບ “ຄວາມເປັນສ່ວນຕົວ, ຄວາມລັບ, ຄວາມໄວ້ໃຈ, ຄວາມປອດໄພ” ແລະ ສັນຍະລັກຂອງຄຳສັບເຫຼົ່ານີ້ ອາດຍາກທີ່ຈະອະທິບາຍໃຫ້ເດັກນ້ອຍເຂົ້າໃຈ, ໂດຍສະເພາະຢ່າງຍິ່ງເມື່ອເດັກຫາກຫູໜວກ. ແຕ່ທ່ານຈຳຕ້ອງອະທິບາຍກ່ຽວກັບຄຳສັບເຫຼົ່ານີ້ຫຼາຍເທື່ອຕໍ່ຫຼາຍເທື່ອ.

ຈົ່ງໃຊ້ສັນຍະລັກຕ່າງໆ, ທ່າທາງ, ຮູບພາບ ແລະ ຄຳສັບ ຈົນທ່ານຮູ້ສຶກໝັ້ນໃຈວ່າ ເດັກເຂົ້າໃຈແລ້ວ. ຈົ່ງສົມມຸດສະຖານະການຕ່າງໆ ຫຼື ໝູນໃຊ້ຕຸກກະຕາ ຫຼື ຮູບພາບ ພະຍາຍາມຫຼາຍໆວິທີ ເພື່ອໃຫ້ເດັກເຂົ້າໃຈແນວຄວາມຄິດເຫຼົ່ານີ້ເທົ່າທີ່ທ່ານຈະເຮັດໄດ້.



## ສັນຍະລັກກ່ຽວກັບການລ່ວງລະເມີດທາງເພດ

ເກືອບທັງໝົດຂອງສັນຍະລັກເຫຼົ່ານີ້ນຳໃຊ້ຢູ່ໃນລາວ ແລະ ອາເມຣິກາ ແຕ່ຍັງມີຄວາມແຕກຕ່າງຢູ່ບາງຂົງເຂດໃນປະເທດລາວ. ດັ່ງນັ້ນ ເຈົ້າຄວນເຊື່ອຖືສິ່ງທີ່ເຈົ້າຮຽນຈາກອາຈານ ຫຼື ໃນຊຸມຊົນຂອງເຈົ້າ.



*ຮ່າງກາຍ*



*ສ່ວນຕົວ*



*ສຳຜັດ*



*ຄວາມລັບ*



*ຊ່ວຍເຫຼືອ*



*ເຈັບ/ລະເມີດ*



*ດີ*



*ຮ້າຍ*



*ຊ່ອງຄອດ*



*ອົງຄະຊາດ (ໂຄ້ຍ)*



*ຮ່ວມເພດ*



*ຂົ່ມຂືນ*

### ຊ່ວຍໃຫ້ເດັກໃສ່ຊື່ ແລະ ອະທິບາຍຜູ້ລ່ວງລະເມີດ

ໃຫ້ເດັກຕັ້ງຊື່ໃຫ້ບຸກຄົນທີ່ພົວພັນໃນຊີວິດຂອງພວກເຂົາ. ເປັນສັນຍະລັກຝຶກຫັດການສັງເກດລາຍລະອຽດຂອງບຸກຄົນ ແລະ ສະຖານທີ່ຕ່າງໆ ພ້ອມທັງສື່ສານສິ່ງເຫຼົ່ານີ້ກັບລູກຂອງທ່ານ.

ສອນໃຫ້ລູກຂອງທ່ານອະທິບາຍຄຳສັບຕ່າງໆ ເຊັ່ນ: ສູງ, ເຕ້ຍ, ຜົມຍາວ, ຕຸ້ຍ, ຈ່ອຍ ແລະ ອື່ນໆ. ເມື່ອເດັກສາມາດພັນລະນາບຸກຄົນ ເຂົາກໍ່ສາມາດພັນລະນາຜູ້ກະທຳຜິດໄດ້.

### ຕັ້ງຊື່ໃຫ້ທຸກໆຄົນເປັນສັນຍະລັກ

ລູກສາວຄົນໜຶ່ງຂອງພວກເຮົາຫູໜວກ ອາຍຸໄດ້ 6 ປີ ຖືກຂົ່ມຂືນ. ຕຳຫຼວດບອກໃຫ້ພວກເຮົາຖາມເຂົາວ່າ ແມ່ນໃຜເປັນຜູ້ກະທຳ. ເຂົາບໍ່ສາມາດຕອບຄຳຖາມໄດ້. ເຫດຜົນໜຶ່ງແມ່ນຍ້ອນເຂົາບໍ່ມີສັນຍະລັກສຳລັບຊື່ຂອງບຸກຄົນທຸກໆຄົນ ທີ່ຢູ່ອ້ອມຂ້າງຕົວ. ດຽວນີ້ພວກເຮົາຈຶ່ງກະຕຸ້ນໃຫ້ບັນດາພໍ່ແມ່ຕັ້ງຊື່ໃຫ້ແກ່ທຸກໆຄົນ ທີ່ເຂົ້າມາພົວພັນກັບຊີວິດຂອງເດັກຫູໜວກ. ເຊິ່ງວິທີນີ້ຈະຊ່ວຍໃຫ້ເດັກສາມາດບອກຊື່ໃຜກໍ່ຕາມທີ່ທຳຮ້າຍເຂົາ ແລະ ນຳ ເຂົາເຈົ້າເຂົ້າສູ່ຂະບວນການຍຸດຕິທຳ.

• *ບົດຮຽນຈາກ: ສູນເດັກຫູໜວກ ເອັນເຊັນ, ປະເທດຊິມບັບເວ, ອາຟຣິກາ.*



# ກິດຈະກຳ

ນີ້ແມ່ນບັນດາກິດຈະກຳ ເພື່ອຊ່ວຍໃຫ້ລູກຂອງທ່ານຢູ່ຢ່າງປອດໄພຈາກການລ່ວງລະເມີດທາງເພດ




## ▶ ບັນດາວິທີ ເພື່ອຊ່ວຍໃຫ້ເດັກເຂົ້າໃຈວ່າ ບາງພາກສ່ວນຂອງຮ່າງກາຍເປັນພາກສ່ວນສ່ວນຕົວ (ປິດລັບ)

ອະທິບາຍໃຫ້ເດັກເຂົ້າໃຈວ່າຮ່າງກາຍຂອງເຂົາແມ່ນເປັນຂອງເຂົາຄົນດຽວ ແລະ ພາກສ່ວນຂອງຮ່າງກາຍບາງບ່ອນແມ່ນເປັນບ່ອນປິດລັບກວ່າພາກສ່ວນອື່ນ. ອະທິບາຍໃຫ້ເດັກຮູ້ວ່າຜູ້ໃຫຍ່ ຫຼື ເດັກທີ່ໃຫຍ່ກວ່າ ບໍ່ຄວນສຳຜັດອະໄວຍະວະເພດ ຫຼື ພາກສ່ວນປິດລັບຂອງເດັກ ແລະ ເດັກເອງກໍ່ບໍ່ຄວນສຳຜັດພາກສ່ວນປິດລັບຂອງຜູ້ໃຫຍ່ເຊັ່ນກັນ ເຖິງແມ່ນວ່າຈະຖືກບອກໃຫ້ເຮັດກໍ່ຕາມ. ຈົ່ງໝູນໃຊ້ຕຸກກະຕາ, ຫຸ່ນເຊີດ ຫຼື ຮູບພາບ ແລະ ສະແດງຄວາມພໍໃຈ ແລະ ບໍ່ພໍໃຈໂດຍຜ່ານການເຄື່ອນເໜັງຂອງຮ່າງກາຍ ແລະ ສີໜ້າ. ພ້ອມນັ້ນກໍ່ອະທິບາຍໃຫ້ລູກຂອງທ່ານເຂົ້າໃຈວ່າ ການເບິ່ງພາກສ່ວນປິດລັບ ຫຼື ຮູບພາບລາມົກແມ່ນເປັນສິ່ງບໍ່ເໝາະສົມ.

ເມື່ອລູກຂອງທ່ານອາຍຸຢູ່ລະຫວ່າງ 3 ເຖິງ 5 ປີ, ໃຫ້ສອນເຂົາກ່ຽວກັບອະໄວຍະວະເພດ ແລະ ພາກສ່ວນສ່ວນຕົວຂອງຮ່າງກາຍອື່ນໆ ແລະ ຄວາມແຕກຕ່າງລະຫວ່າງຮ່າງກາຍຂອງເດັກຍິງ ແລະ ເດັກຊາຍ.

ສິ່ງເຫຼົ່ານີ້ແມ່ນແນວຄິດທີ່ຍາກທີ່ຈະສອນໃຫ້ເດັກເຂົ້າໃຈ, ສະນັ້ນ ຈົ່ງໝູນໃຊ້ຮູບການຕ່າງໆເພື່ອຊ່ວຍໃຫ້ເດັກເຂົ້າໃຈ. ການສອນອາດເກີດຂຶ້ນຢ່າງເປັນທຳມະຊາດ. ຍົກຕົວຢ່າງ ໃນໄລຍະທີ່ລູກຂອງທ່ານກຳລັງຖ່າຍເຄື່ອງ. ທ່ານຍັງສາມາດນຳໃຊ້ ຫຼື ປະດິດຕຸກກະຕາເພື່ອຊ່ວຍໃນການສອນກ່ຽວກັບພາກສ່ວນຂອງຮ່າງກາຍ.

## ▶ ວິທີຊ່ວຍໃຫ້ລູກຂອງທ່ານຮຽນຮູ້ການຮ້ອງເພື່ອຂໍຄວາມຊ່ວຍເຫຼືອ

ເດັກຫຼາຍຄົນບໍ່ມັກນຳໃຊ້ສຽງຂອງພວກເຂົາ. ຍ້ອນວ່າ ເມື່ອພວກເຂົາເວົ້າຄົນອື່ນມັກຫົວໃສ່ພວກເຂົາ ແລະ ບອກວ່າ ສຽງຂອງພວກເຂົາມັນຕະຫຼົກ ຫຼື ໜ້າຢາກຫົວ.

ບອກໃຫ້ເດັກຮ້ອງກໍ່ໄດ້ ເມື່ອມີຄົນອື່ນມາກໍ່ກວນເຂົາ ຫຼື ເມື່ອຕ້ອງການຄວາມຊ່ວຍເຫຼືອ.

ສອນໃຫ້ເດັກຮ້ອງວ່າ "ບໍ່, ບໍ່!" ຫຼື "ຊ່ວຍແດ່", ຫຼື ກະທືບພື້ນ ຖ້າຫາກມີຜູ້ໃຫຍ່ ຫຼື ເດັກທີ່ໃຫຍ່ກວ່າພະຍາຍາມຈະທຳຮ້າຍເຂົາ. ບອກໃຫ້ເດັກຮ້ອງ, ກັດ ແລະ ພະຍາຍາມໜີ. ໝູນໃຊ້ຕຸກກະຕາ ຫຼື ບົດລະຄອນ ເພື່ອສະແດງໃຫ້ເດັກເຂົ້າໃຈຄວາມໝາຍຂອງທ່ານ.



## ▶ ວິທີຊ່ວຍໃຫ້ເດັກຮຽນຮູ້ການປະຕິເສດ

ມີຫຼາຍໆຄັ້ງທີ່ເດັກຫູໜວກບໍ່ເຂົ້າໃຈເຫດຜົນວ່າຍ້ອນຫຍັງ ພວກເຂົາຕ້ອງກະທຳສິ່ງນັ້ນສິ່ງນີ້ ຫຼື ຍ້ອນຫຍັງສິ່ງເຫຼົ່ານັ້ນຈຶ່ງເກີດກັບພວກເຂົາ. ເດັກຫູໜວກຕ້ອງການເຮັດໃຫ້ຄົນອື່ນພໍໃຈ ແລະ ຈຶ່ງຮຽນຮູ້ທີ່ຈະເຊື່ອຟັງໂດຍປາສະຈາກການຖາມຄຳຖາມໃດໆ. ສິ່ງນີ້ອາດກາຍເປັນບັນຫາ ຖ້າມີໃຜຜູ້ໜຶ່ງບອກໃຫ້ພວກເຂົາເຮັດໃນສິ່ງທີ່ບໍ່ຖືກຕ້ອງ.

ຊ່ວຍໃຫ້ເດັກຝຶກຊ້ອມການເວົ້າວ່າ "ບໍ່" ທຳອິດ, ລອງສ້າງສະຖານະການທີ່ເດັກຕ້ອງໄດ້ເວົ້າວ່າ "ບໍ່".







ບອກໃຫ້ລູກຂອງທ່ານໃຫ້ບອກທ່ານ ຫຼື ຜູ້ໃຫຍ່ຄົນອື່ນທັນທີ ຖ້າມີໃຜບອກໃຫ້ເຂົາເຄີຍກະທຳໃນສິ່ງທີ່ເຂົາຮູ້ສຶກອຶດອັດ.



## ▶ ວິທີສອນໃຫ້ເດັກເຂົ້າໃຈວ່າເຂົາບໍ່ຈຳເປັນຕ້ອງເຊື່ອຟັງຜູ້ທີ່ໃຫຍ່ກວ່າສະເໝີ

ເມື່ອເດັກຮຽນຮູ້ການເວົ້າ "ບໍ່" ທ່ານສາມາດສົມມຸດສະຖານນະການທີ່ເດັກບໍ່ຈຳເປັນຕ້ອງເຊື່ອຟັງຜູ້ໃຫຍ່.




## ▶ ວິທີຊ່ວຍໃຫ້ເດັກຮູ້ຈັກສະຖານທີ່ທີ່ຈະຂໍຄວາມຊ່ວຍເຫຼືອ

ບຸກຄົນໃດທີ່ລູກຂອງທ່ານສາມາດໄປຫາໄດ້? ເດັກຄວນມີບຸກຄົນຢ່າງໜ້ອຍ 3 ຄົນທີ່ເຂົາສາມາດໄປຫາເມື່ອມີບັນຫາເກີດຂຶ້ນ. ເຊິ່ງອາດຈະແມ່ນ ພໍ່ ຫຼື ແມ່, ເອື້ອຍ ຫຼື ອ້າຍ, ປ້າ, ເພື່ອນບ້ານ ຫຼື ຄົນອື່ນໆ ທີ່ທ່ານເຊື່ອໃຈ ນອກຈາກຄົນພາຍໃນຄອບຄົວ ຫຼື ແມ່ຂອງໝູ່ຂອງເດັກ.

ເດັກຄວນຮັບຮູ້ວ່າຖ້າຜູ້ໃດຜູ້ໜຶ່ງບໍ່ຢູ່ ຫຼື ບໍ່ໃຫ້ຄວາມໃສ່ໃຈແກ່ເດັກ. ພວກເຂົາຄວນໄປຫາຄົນອື່ນ. ບອກໃຫ້ບຸກຄົນທີ່ທ່ານສອນໃຫ້ເດັກໄປຂໍຄວາມຊ່ວຍເຫຼືອ ຮູ້ນຳຖ້າຈຳເປັນ. ຝຶກແອບໃຫ້ເດັກຮູ້ວ່າຄວນໄປຫາບຸກຄົນໃດ ສຳລັບຄວາມຊ່ວຍເຫຼືອທີ່ແຕກຕ່າງກັນ.



# ຂ້ອຍຈະຮູ້ໄດ້ແນວໃດວ່າລູກຂອງຂ້ອຍຖືກລ່ວງລະເມີດ?

ເມື່ອເດັກຖືກລ່ວງລະເມີດທາງເພດ, ພວກເຂົາອາດຮູ້ສຶກຢ້ານກົວທີ່ຈະເລົ່າໃຫ້ທ່ານຟັງ. ຜູ້ລ່ວງລະເມີດອາດຂູ່ບໍ່ໃຫ້ເດັກເວົ້າຫຍັງ ແລະ ເດັກກໍ່ຮູ້ສຶກຢ້ານກົວວ່າຕົນເອງໄດ້ເຮັດຜິດບາງຢ່າງ ຫຼື ເດັກອາດບໍ່ຮູ້ວິທີທີ່ຈະສື່ສານກ່ຽວກັບສິ່ງທີ່ເກີດຂຶ້ນ.

ເນື່ອງຈາກວ່າ ເດັກບໍ່ຕ້ອງການສື່ສານກ່ຽວກັບການຖືກລ່ວງລະເມີດ, ທ່ານຈຳຕ້ອງໄດ້ສັງເກດຫາສັນຍານທີ່ເປັນໄປໄດ້. ສັນຍານຕໍ່ໄປນີ້ບໍ່ແມ່ນຜົນຈາກການຖືກລ່ວງລະເມີດສະເໝີໄປ ແຕ່ຖ້າສັງເກດມີສັນຍານເຫຼົ່ານີ້ ທ່ານຄວນເອົາໃຈໃສ່ ໂດຍສະເພາະ ຖ້າເດັກສະແດງອອກໃນຫຼາຍໆສັນຍານເຫຼົ່ານີ້.

## ບາງສັນຍານທາງຮ່າງກາຍລວມມີ:

- ຄວາມເຈັບປວດທີ່ບໍ່ສາມາດອະທິບາຍໄດ້, ຮອຍບວມ, ຮອຍແດງຊ້ຳ ຫຼື ເລືອດອອກທີ່ປາກ ຫຼື ທີ່ອະໄວຍະວະເພດ ຫຼື ອ້ອມບໍລິເວນທະວານ.
- ສະລິບທີ່ຈີກຂາດ ຫຼື ມີເລືອດ.
- ມີບັນຫາໃນການຖ່າຍເບົາ ຫຼື ຖ່າຍໜັກ ຫຼື ມີເລືອດຕິດໃນນ້ຳຍ່ຽວ ຫຼື ອາຈົມ.
- ມີສິ່ງຜິດປົກກະຕິອອກຈາກອະໄວຍະວະເພດ ຫຼື ທະວານ ຫຼື ການຕິດເຊື້ອພະຍາດຕິດຕໍ່ທາງເພດ.
- ຮອຍຝົກຊ້ຳ, ເຈັບທິວ ຫຼື ການເຈັບທ້ອງນ້ອຍ.

## ເດັກທີ່ຖືກລ່ວງລະເມີດທາງເພດອາດຈະ:

- ຢຸດການອາບນ້ຳ ຫຼື ທຳຄວາມສະອາດຕົນເອງເລື້ອຍໆກວ່າປົກກະຕິ ຫຼື ບໍ່ຍອມຖ່າຍເຄື່ອງ.
- ຫຼິ້ນກັບເດັກຄົນອື່ນ ຫຼື ເຄື່ອງຫຼິ້ນໂດຍມີລັກສະນະທາງເພດ, ໃນລັກສະນະທີ່ຮູ້ຈັກວິທີ ຫຼື ຫຼິ້ນລັກສະນະດັ່ງກ່າວເລື້ອຍໆເຊິ່ງບໍ່ເໝາະສົມກັບໄວອາຍຸ.
- ຮູ້ຈັກເລື່ອງເພດຫຼາຍກວ່າເດັກຄົນອື່ນ.

## ເດັກທີ່ຕົກເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງ ແລະ ການລ່ວງລະເມີດທາງເພດອາດຈະ:

- ເບິ່ງຄືຮູ້ສຶກຢ້ານກົວ, ອ່ອນໄຫວ ແລະ ລະແວງ ຫຼື ຢ້ານກົວສະຖານທີ່ ຫຼື ບຸກຄົນໃດໜຶ່ງຢ່າງກະທັນຫັນ ຫຼື ຕ້ອງການຢາກຢູ່ນຳແຕ່ພໍ່ແມ່ເທົ່ານັ້ນ.



- ລຶກລັບ ຫຼື ຕ້ອງການຢາກຢູ່ຄົນດຽວຕະຫຼອດເວລາ.
- ເລີ່ມປະພຶດຕົນເປັນເດັກລຶງກວ່າເກົ່າ ຫຼື ຄ້າຍຄືກັບເດັກນ້ອຍຫຼາຍຂຶ້ນ.
- ກາຍເປັນຄົນຮຸນແຮງ ແລະ ລ່ວງ.
- ພະຍາຍາມໜີອອກຈາກເຮືອນ.
- ຮູ້ສຶກໂສກເສົ້າຫງ່ວມເຫງົາຢູ່ຕະຫຼອດເວລາ ຫຼື ບໍ່ສະແດງຄວາມຮູ້ສຶກໃດໆເລີຍ.
- ມີບັນຫາໃນການນອນບໍ່ຫຼັບຍ້ອນຝັນຮ້າຍ, ຢ້ານຄວາມມືດ ແລະ ອາດຍ່ຽວໃສ່ບ່ອນ.
- ຢ້ານການຖືກເນື້ອຕ້ອງຕົວ ຫຼື ການເຮັດກິດຈະກຳທາງຮ່າງກາຍຕ່າງໆ.

## ຖ້າທ່ານສົງໄສວ່າມີການລ່ວງລະເມີດທາງເພດ

ພະຍາຍາມທຸນທ່ຽງ, ກະຕຸ້ນໃຫ້ລູກຂອງທ່ານສະແດງໃຫ້ທ່ານຮູ້ວ່າແມ່ນຫຍັງເກີດຂຶ້ນ ແລະ ເຂົາຮູ້ຫຍັງແດ່.

ເພື່ອໃຫ້ໄດ້ຂໍ້ມູນຫຼາຍຂຶ້ນ ລອງແຕ່ງບົດເລື່ອງກັບລູກຂອງທ່ານ. ພະຍາຍາມເອົາໃຈໃສ່ໃນສິ່ງທີ່ເຂົາສະແດງອອກເນື່ອງຈາກວ່າ ເດັກອາດບໍ່ມີຄຳສັບ ຫຼື ສັນຍະລັກ ທີ່ຈະອະທິບາຍໃຫ້ທ່ານຮູ້ຢ່າງຈະແຈ້ງ. ໂດຍອາໄສນ້ຳສຽງ ແລະ ສີໜ້າ ຈຶ່ງສະແດງໃຫ້ລູກຂອງທ່ານຮູ້ວ່າທ່ານເຊື່ອເຂົາ ແລະ ຈະບໍ່ລົງໂທດເຂົາ.

# ຖ້າລູກຂອງທ່ານຖືກລ່ວງລະເມີດທາງເພດ

ຖ້າລູກຂອງທ່ານຖືກລ່ວງລະເມີດທາງເພດ, ທ່ານສາມາດຊ່ວຍໄດ້ຖ້າທ່ານ:

- ເຊື່ອໃນສິ່ງທີ່ເດັກສະແດງ ຫຼື ສື່ສານກັບທ່ານ ມັນອາດເປັນສິ່ງຍາກທີ່ຈະເຊື່ອວ່າຄົນທີ່ທ່ານຮູ້ຈັກ ແລະ ໄວ້ໃຈຈະເປັນຄົນກະທຳສິ່ງນັ້ນ ແຕ່ຫາຍາກທີ່ເດັກນ້ອຍຈະແຕ່ງເລື່ອງເພື່ອຕົວະກ່ຽວກັບການຖືກລ່ວງລະເມີດທາງເພດ. ຜູ້ລ່ວງລະເມີດທາງເພດບາງຄົນອາດແມ່ນເພື່ອນມິດສະໜິດສະໜົມກັບພໍ່ແມ່ ຍ້ອນແນວນັ້ນ ຈຶ່ງສາມາດເຂົ້າຫາເດັກໄດ້ ແລະ ເຮັດໃຫ້ພໍ່ແມ່ບໍ່ລາຍງານກ່ຽວກັບການກະທຳດັ່ງກ່າວ.
- ຍ້ອງຍໍທີ່ເດັກບອກທ່ານ. ເດັກນ້ອຍຕ້ອງການຢາກຮູ້ວ່າສິ່ງທີ່ພວກເຂົາເຮັດໃນການສື່ສານກ່ຽວກັບການກະທຳດັ່ງກ່າວ ແມ່ນສິ່ງທີ່ຖືກຕ້ອງແລ້ວ.
- ຢໍ້າຄືນໃຫ້ເດັກໝັ້ນໃຈວ່າ ການລ່ວງລະເມີດທາງເພດນັ້ນ ບໍ່ແມ່ນຄວາມຜິດຂອງເດັກ ແລະ ທ່ານກໍ່ບໍ່ໄດ້ໃຈຮ້າຍໃຫ້ເຂົາ. ພະຍາຍາມໝູນໃຊ້ຫຼາຍໆວິທີໃນການສື່ສານກ່ຽວກັບເລື່ອງນີ້ ເທົ່າທີ່ຈະເຮັດໄດ້.
- ຮັກສາຄວາມປອດໄພໃຫ້ເດັກ ພະຍາຍາມປ້ອງກັນບໍ່ໃຫ້ມີການພົບປະກັນຄັ້ງໃໝ່ລະຫວ່າງລູກຂອງທ່ານກັບຜູ້ກະທຳຜິດ ຖ້າຫາກເຮັດບໍ່ໄດ້ ກໍ່ຈົ່ງຢູ່ກັບເດັກ ຫຼື ໃຫ້ຜູ້ໃດຜູ້ໜຶ່ງທີ່ຮູ້ເລື່ອງດັ່ງກ່າວໃຫ້ຢູ່ກັບເດັກສະເໝີ ເມື່ອຜູ້ລ່ວງລະເມີດທາງເພດເດັກຢູ່ທີ່ນັ້ນ.
- ປິ່ນປົວບັນຫາທາງດ້ານຮ່າງກາຍທີ່ເກີດຈາກການລ່ວງລະເມີດທາງເພດ. ພະຍາຍາມໃຫ້ລູກຂອງທ່ານໄດ້ຮັບການກວດສອບຫາພະຍາດຕິດຕໍ່ທາງເພດສຳພັນ. ເຖິງແມ່ນວ່າເຂົາຈະບໍ່ມີອາການໃດໆກໍ່ຕາມ ພະຍາດຕິດຕໍ່ທາງເພດບາງຊະນິດ ບໍ່ສະແດງອາການ ຫຼື ຈະສະແດງອາການກໍ່ຕໍ່ເມື່ອເດັກໃຫຍ່ຂຶ້ນແດ່ແລ້ວ.

ຜູ້ເປັນພໍ່ແມ່ກໍ່ຕ້ອງການຄວາມຊ່ວຍເຫຼືອເຊັ່ນດຽວກັນ. ພໍ່ແມ່ອາດມີຫຼາຍໆຄວາມຮູ້ສຶກ ເຊັ່ນ: ຄວາມຮູ້ສຶກບໍ່ເຊື່ອ, ໃຈຮ້າຍ ແລະ ເສຍໃຈ ເມື່ອຮູ້ວ່າລູກຂອງຕົນຖືກລ່ວງລະເມີດທາງເພດ. ພໍ່ແມ່ອາດຕຳນິຕົນເອງ ຫຼື ຕຳນິເຊິ່ງກັນ ແລະ ກັນ ຕໍ່ສິ່ງທີ່ເກີດຂຶ້ນກັບລູກ. ພໍ່ແມ່ຄວນປຶກສາໂອ້ລົມກ່ຽວກັບຄວາມຮູ້ສຶກເຫຼົ່ານີ້ ກັບຜູ້ໃດຜູ້ໜຶ່ງ ທີ່ພວກເຂົາໄວ້ໃຈ ເຊິ່ງໃນນີ້ສາມາດຊ່ວຍໄດ້. ຈົ່ງມີຄວາມອົດທົນກັບຕົວເອງ. ມັນອາດກິນເວລາດົນໃນການປ່ຽນແປງຄວາມຮູ້ສຶກເຫຼົ່ານີ້.

ຄອບຄົວບໍ່ຄວນລະອາຍໃຈທີ່ມີລູກຖືກລ່ວງລະເມີດທາງເພດ ການລ່ວງລະເມີດທາງເພດແມ່ນອາຊະຍາກຳ, ກໍ່ເໝືອນກັບການລັກຊັບຂອງຄົນອື່ນ ເຊິ່ງບໍ່ໄດ້ເປັນຕົ້ນເຫດມາຈາກຄອບຄົວເລີຍ.






# ເຮັດໃຫ້ເດັກທຸກໆຄົນໃນຊຸມຊົນຢູ່ຢ່າງປອດໄພ

ຫຼາຍຄົນຮູ້ສຶກອຶດອັດ ທີ່ຈະເວົ້າເຖິງການລ່ວງລະເມີດທາງເພດ ຫຼື ຍອມຮັບວ່າເດັກນ້ອຍບໍ່ປອດໄພ ຫຼື ສົນທະນາກ່ຽວກັບຜົນທີ່ຕາມມາຈາກການລ່ວງລະເມີດທາງເພດ. ແຕ່ວ່າ ການລ່ວງລະເມີດທາງເພດນີ້ສາມາດປ້ອງກັນໄດ້ ຖ້າຫາກທຸກຄົນເວົ້າເຖິງມັນ.

ໂຄງການໃນໂຮງຮຽນ ແລະ ການລວມຊຸມຊົນໜຸ່ມໃນຊຸມຊົນ ສາມາດສຶກສາອົບຮົມຊຸມຊົນທັງໝົດກ່ຽວກັບການລ່ວງລະເມີດທາງເພດ. ການສະແດງບົດລະຄອນສັ້ນ ຫຼື ບົດລະຄອນຕະຫຼົກ ກ່ຽວກັບຜົນກະທົບຂອງການລ່ວງລະເມີດທາງເພດອາດເຮັດໃຫ້ຜູ້ຄົນສົນທະນາກ່ຽວກັບບັນຫານີ້ເປັນກຸ່ມໄດ້ງ່າຍຂຶ້ນ.

**ນີ້ແມ່ນບາງວິທີຂອງຊຸມຊົນ ເພື່ອດຳເນີນການຕ້ານການລ່ວງລະເມີດທາງເພດ:**

- ຈັດຝຶກອົບຮົມສຳມະນາສຳລັບພໍ່ແມ່ ແລະ ຄູອາຈານ ເຊິ່ງເຮັດໃຫ້ພວກເຂົາຮູ້ວິທີສື່ສານກັບເດັກກ່ຽວກັບວິທີປ້ອງກັນການລ່ວງລະເມີດທາງເພດ. ອ່ານບັນດາເອກະສານດັ່ງໆ ຖ້າບໍ່ສາມາດສົນທະນາກັບບັນດາພໍ່ແມ່ໄດ້.
- ຈັດເຝິກອົບຮົມສຳລັບຄູອາຈານ, ພະນັກງານທີ່ເຮັດວຽກໃນໂຮງຮຽນ, ທ່ານໝໍ ແລະ ພະນັກງານເຮັດວຽກກ່ຽວກັບສຸຂະອະນາໄມ ເພື່ອໃຫ້ພວກເຂົາສາມາດສັງເກດເຫັນສັນຍານທີ່ຊີ້ບອກວ່າເດັກຖືກລ່ວງລະເມີດທາງເພດ ແລະຮຽນຮູ້ວິທີໂອ້ລົມກັບເດັກທີ່ອາດເປັນຜູ້ເຄາະຮ້າຍຈາກການຖືກລ່ວງລະເມີດທາງເພດ. ຈັດສຳມະນາໃຫ້ພະນັກງານທີ່ເຮັດວຽກໃນໂຮງຮຽນ ເພື່ອສົນທະນາກ່ຽວກັບຈັນຍາທຳຂອງການເຮັດວຽກກັບເດັກນ້ອຍ.
- ການສຶກສາສຳລັບເດັກນັກຮຽນ ເພື່ອປ້ອງກັນການລ່ວງລະເມີດທາງເພດ. ການສຶກສາດັ່ງກ່າວຄວນກວມເອົາການສຶກສາທີ່ເໝາະສົມກັບໄວອາຍຸກ່ຽວກັບບັນຫາສຸຂະພາບຈະເລີນພັນ.
- ລາຍງານການລ່ວງລະເມີດທາງເພດເມື່ອມັນເກີດຂຶ້ນ ສາມາດຊ່ວຍປ້ອງກັນເຫດການດັ່ງກ່າວໃນອະນາຄົດ. ຊອກຫາວິທີການທີ່ມີ ເພື່ອລາຍງານກ່ຽວກັບການລ່ວງລະເມີດທາງເພດ ແລະ ເຮັດໃຫ້ຂໍ້ມູນດັ່ງກ່າວສາມາດສະໜອງໃຫ້ບັນດາພໍ່ແມ່, ຄູອາຈານ, ພະນັກງານສຸຂະອະນາໄມ ແລະ ບຸກຄົນອື່ນໆທີ່ສຶກສາກ່ຽວກັບການລ່ວງລະເມີດທາງເພດເດັກ. ຖ້າຫາກບໍ່ມີວິທີການ ເພື່ອລາຍງານກ່ຽວກັບວຽກງານດັ່ງກ່າວ ກໍ່ຈົ່ງຈັດຕັ້ງກັນຂຶ້ນ.